ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ.45./ສພຂ.ຊຍ
ໄຊຍະບູລີ, ວັນທີ 31 ທັນວາ 2021

# ມະຕິ
## ກອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ
## ວ່າດ້ວຍ ການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງອົງການໄອຍະການປະຊາຊົນແຂວງ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 77 ກ່ຽວກັບສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 59 ວ່າດ້ວຍກອງປະຊຸມປະຈຳປີ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ບົດລາຍງານ ຂອງອົງການໄອຍະການປະຊາຊົນແຂວງ ສະບັບເລກທີ 575/ອຍກ.ຊຍ, ລົງວັນທີ 24 ທັນວາ 2021 ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງເລິກເຊິ່ງ ຕໍ່ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງອົງການໄອຍະການປະຊາຊົນແຂວງ ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ II, ວັນທີ 29-31 ທັນວາ 2021.

### ກອງປະຊຸມ ຕົກລົງ:

### ມາດຕາ 1 ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ຂອງອົງການໄອຍະການປະຊາຊົນແຂວງ

ກອງປະຊຸມໄດ້ສະແດງຄວາມຊົມເຊີຍ ອົງການໄອຍະການປະຊາຊົນແຂວງ ທີ່ໄດ້ເອົາໃຈໃສ່ຕັ້ງໜ້າປະຕິບັດມະຕິກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ I ສະບັບເລກທີ 06/ສພຂ.ຊຍ, ລົງວັນທີ 05 ມັງກອນ 2021 ດ້ວຍຄວາມຮັບຜິດຊອບສູງ. ໃນ 01 ປີ ຜ່ານມາ ສາມາດບັນລຸຄາດໝາຍຫຼາຍດ້ານ ເປັນຕົ້ນໄດ້ປັບປຸງກົງຈັກການຈັດຕັ້ງ, ແຕ່ງຕັ້ງຄະນະກຳມະການໄອຍະການປະຊາຊົນແຂວງ ແລະ ເຂດ, ບັນຈຸຊັບຊ້ອນ, ບຳລຸງສ້າງພະນັກງານ ທາງດ້ານທິດສະດີ, ວິຊາສະເພາະ, ຈັນຍາບັນ-ຈັນຍາທຳ ໃຫ້ແກ່ພະນັກງານໄອຍະການປະຊາຊົນ ຍູ້ແຮງຂະບວນການວຽກດີຄົນເດັ່ນຕາມຄຳຂວັນ 3 ມີ 4 ຮັບປະກັນ, ປະຕິບັດສິດ, ພາລະບົດບາດໃນການຕິດຕາມກວດກາການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ການດຳເນີນຄະດີຢູ່ສານ, ການປະຕິບັດກົດໝາຍຢູ່ຄ້າຍຄຸມຂັງ-ດັດສ້າງ, ການຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ການພິຈາລະນາແກ້ໄຂຄະດີ ຂອງອົງການໄອຍະການປະຊາຊົນ ແຂວງ ແລະ ເຂດ ດີຂຶ້ນ ເປັນຕົ້ນຄຸນນະພາບໃນການຖະແຫຼງ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຍັງຮັກສາມູນເຊື້ອສານພິຈາລະນາ

ຕັດສິນເອົາຕາມການຖະແຫຼງສັ່ງຟ້ອງຂອງໄອຍະການ 100%. ເຊິ່ງສະແດງອອກ: ໃນ 01 ປີຜ່ານມາ ມີສຳນວນຄະດີອາຍາຄ້າງມາ 02 ເລື່ອງ, ເຂົ້າໃໝ່ 512 ເລື່ອງ, ລວມທັງໝົດ 514 ເລື່ອງ, ແກ້ໄຂແລ້ວ 509 ເລື່ອງ ເທົ່າກັບ 99,02%; ພວມສືບຕໍ່ແກ້ໄຂ 05 ເລື່ອງ; ເທົ່າກັບ 0,97%, ຄະດີອາຍາຂັ້ນອຸທອນ ມີ 04 ເລື່ອງ, ແກ້ໄຂແລ້ວ 04 ເລື່ອງ ເທົ່າກັບ 100%; ຄະດີແພ່ງຂັ້ນຕົ້ນຄ້າງມາ 02 ເລື່ອງ, ເຂົ້າໃໝ່ 37 ເລື່ອງ, ລວມທັງໝົດ 39 ເລື່ອງ, ແກ້ໄຂແລ້ວ 35 ເລື່ອງ ເທົ່າກັບ 90%; ພວມສືບຕໍ່ແກ້ໄຂ 04 ເລື່ອງ ເທົ່າກັບ 10%; ຄະດີແພ່ງຂັ້ນອຸທອນມີ 05 ເລື່ອງ, ແກ້ໄຂແລ້ວ 04 ເລື່ອງ ເທົ່າກັບ 90% ພວມສືບຕໍ່ແກ້ໄຂ 01 ເລື່ອງ ເທົ່າກັບ 10%.

ຄຽງຄູ່ກັນນັ້ນ ກອງປະຊຸມເຫັນວ່າ ອົງການໄອຍະການປະຊາຊົນແຂວງ ຈະຕ້ອງສືບຕໍ່ເອົາໃຈໃສ່ ດັ່ງນີ້:

1) ການຕິດຕາມກວດກາການເຄົາລົບລັດຖະທຳມະນູນ, ການປະຕິບັດກົດໝາຍ ແລະ ການອອກນິຕິກຳໃຕ້ກົດໝາຍ ຂອງບັນດາພະແນກການ, ອົງການ, ອົງການປົກຄອງທ້ອງຖິ່ນ, ພົນລະເມືອງ ຍັງເຮັດໄດ້ໜ້ອຍ, ການຕິດຕາມກວດກາຄວາມສອດຄ່ອງຂອງກົດໝາຍ ແລະ ການອອກນິຕິກຳຂອງອົງການລັດ ຕາມມາດຕາ 39 ແລະ 40 ຂອງກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ ສະບັບປີ 2017 ຍັງເຮັດບໍ່ທັນເປັນປົກກະຕິ ແລະ ຕໍ່ເນື່ອງ ເປັນສາເຫດໃຫ້ຫຼາຍມາດຕາ ຂອງກົດໝາຍ ບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ ຫຼື ຈັດຕັ້ງປະຕິບັດບໍ່ເອກະພາບກັນ;
2) ການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ, ໃນການນຳໃຊ້ 7 ມາດຕະການສະກັດກັ້ນ ຂອງອົງການສືບສວນ-ສອບສວນ ແລະ ການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ ຈຳນວນໜຶ່ງຍັງບໍ່ສອດຄ່ອງກັບກົດໝາຍ ແຕ່ຍັງບໍ່ທັນມີວິທີການ ສະເໜີພາກສ່ວນທີ່ກ່ຽວຂ້ອງແກ້ໄຂໃຫ້ທັນການ ຕາມກົດໝາຍກຳນົດໄວ້;
3) ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີຢູ່ສານ ຂອງພະນັກງານໄອຍະການປະຊາຊົນ ບໍ່ທັນປະຕິບັດສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
4) ການຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂອງອົງການໄອຍະການປະຊາຊົນ ຍັງມີລັກສະນະສັງລວມສະຖິຕິ, ຍັງບໍ່ໄດ້ລົງເລິກເຂົ້າຮ່ວມແຕ່ຫົວທີ ໃນການກວດກາຄວາມຖືກຕ້ອງຂອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມກົດໝາຍ ແລະ ລະບຽບການກຳນົດໄວ້;
5) ການປັບປຸງການຈັດຕັ້ງ, ບັນຈຸຊັບຊ້ອນແຕ່ງຕັ້ງຕຳແໜ່ງງານ ຍັງບໍ່ທັນມີຈຸດສຸມຄົບຖ້ວນ ໂດຍສະເພາະຢູ່ບັນດາເຂດ ແມ່ນຍັງບໍ່ທັນມີຮອງຫົວໜ້າ ອົງການໄອຍະການທັງສາມເຂດ;
6) ການປະຕິບັດກົນໄກປະສານສົມທົບ ລະຫວ່າງອົງການໄອຍະການປະຊາຊົນ ກັບພາກສ່ວນທີ່ກ່ຽວຂ້ອງ ໃນການດຳເນີນຄະດີຕາມຂະບວນຍຸຕິທຳ ຍັງບໍ່ທັນເປັນລະບົບຄ່ອງຕົວ ແລະ ສອດຄ່ອງກັບພາລະບົດບາດສິດ ແລະ ໜ້າທີ່ ຂອງພາກສ່ວນຕ່າງໆ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງອົງການໄອຍະການປະຊາຊົນແຂວງ**

ກອງປະຊຸມ ເຫັນດີຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ທີ່ກຳນົດ 05 ຄາດໝາຍສູ້ຊົນ, 05 ແຜນວຽກຈຸດສຸມ ແລະ 05 ມາດຕະການຈັດຕັ້ງປະຕິບັດ ໃນບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ເພື່ອຮັບປະກັນການຈັດຕັ້ງປະຕິບັດຕາມສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ທີ່ກົດໝາຍກຳນົດໄວ້, ກອງປະຊຸມສະພາປະຊາຊົນແຂວງ ສະເໜີໃຫ້ເອົາໃຈໃສ່ບາງວຽກງານເພີ່ມເຕີມ ດັ່ງນີ້:

1) ເອົາໃຈໃສ່ປະຕິບັດພາລະບົດບາດຕິດຕາມກວດກາ ການເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການຈັດຕັ້ງລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງໃຫ້ຫຼາຍຂຶ້ນກວ່າເກົ່າ, ສຸມໃສ່ຕິດຕາມກວດກາການອອກນິຕິກຳໃຕ້ກົດໝາຍ ແລະ ການຈັດຕັ້ງປະຕິບັດບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ມີຄວາມຖືກຕ້ອງ ແລະ ເອກະພາບ;

2) ເອົາໃຈໃສ່ຍົກສູງຄຸນນະພາບໃນການຕິດຕາມກວດກາການປະຕິບັດໜ້າທີ່ ຂອງອົງການສືບສວນ ສອບສວນ ໃນການປະຕິບັດ 7 ມາດຕະການສະກັດກັ້ນ ຕາມມາດຕາ 136 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປີ 2017, ແກ້ໄຂປະກົດການລະເມີດກົດໝາຍໃນການດຳ ເນີນຄະດີ ຂອງອົງການສືບສວນ-ສອບສວນ ເປັນຕົ້ນ: ການກັກຕົວ, ຈັບຕົວ ທີ່ບໍ່ຖືກຕ້ອງ ຕາມ ກົດໝາຍໃຫ້ເປັນຮູບປະທຳ;

3) ຕິດຕາມກວດກາການປະຕິບັດກົດໝາຍວ່າດ້ວຍ ການປະຕິບັດຄຳຕັດສິນຂອງສານ ຂອງອົງການ ຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ມີຄວາມວ່ອງໄວ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບ ການທີ່ກ່ຽວຂ້ອງ, ຮັບປະກັນໃຫ້ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໄດ້ຮັບການຈັດຕັ້ງປະ ຕິບັດ ຢ່າງຖືກຕ້ອງເຂັ້ມງວດ ຕາມມາດຕາ 98 ຂອງລັດຖະທຳມະນູນ;

4) ເພີ່ມທະວີສຶກສາອົບຮົມ ການເມືອງ-ແນວຄິດ ແລະ ວິຊາສະເພາະໃຫ້ແກ່ພະນັກງານອົງການໄອຍະ ການປະຊາຊົນ ຕິດພັນກັບການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງ ແນໃສ່ຍົກສູງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຄວາມຮູ້, ຄວາມສາມາດ ໂດຍສະ ເພາະສະຕິຕື່ນຕົວ, ຄວາມເປັນເຈົ້າການ ແລະ ເຄົາລົບປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ;

5) ເອົາໃຈໃສ່ປະຕິບັດກົນໄກການປະສານສົມທົບ ລະຫວ່າງອົງການໄອຍະການປະຊາຊົນແຂວງ ກັບ ສານປະຊາຊົນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ພະແນກຍຸຕິທຳແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການດຳເນີນຄະດີ ຕາມຂະບວນຍຸຕິທຳໃຫ້ມີຄວາມຄ່ອງຕົວ, ສອດຄ່ອງ ຕາມສິດ ແລະ ໜ້າທີ່ຂອງຕົນ ຕາມກົດໝາຍກຳນົດໄວ້.

**ມາດຕາ 3 ຮັບຮອງເອົາບັນດາມາດຕະການການຈັດຕັ້ງປະຕິບັດ ຂອງອົງການໄອຍະການປະຊາຊົນແຂວງ**

ກອງປະຊຸມເຫັນດີເປັນເອກະພາບຕໍ່ 05 ມາດຕະການຈັດຕັ້ງປະຕິບັດ ທີ່ອົງການໄອຍະການປະຊາຊົນ ແຂວງກຳນົດໄວ້ໃນບົດລາຍງານ, ແຕ່ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນການດັ່ງກ່າວ ໄດ້ຮັບການຈັດຕັ້ງ ຢ່າງມີປະສິດທິຜົນ, ກອງປະຊຸມສະເໜີບາງມາດຕະການເພີ່ມເຕີມ ໃຫ້ອົງການໄອຍະການປະຊາຊົນແຂວງ ດັ່ງນີ້:

1) ຄະນະພັກ, ຄະນະນຳ ຂອງອົງການໄອຍະປະຊາຊົນ ເປັນເຈົ້າການຈັດຕັ້ງຜັນຂະຫຍາຍມະຕິ ຂອງ ກົມການເມືອງສູນກາງພັກ ເລກທີ 112/ກມສພ, ລົງວັນທີ 02 ມິຖຸນາ 2020 ວ່າດ້ວຍການຍົກ ສູງຄຸນນະພາບການດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ເປັນວຽກງານອັນລະອຽດ ຂອງອົງການ ໄອຍະການປະຊາຊົນແຂວງ ແລະ ເຂດ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ມີຄຸນນະພາບດີ ຂຶ້ນເປັນກ້າວໆ;

2) ເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດ ໃຫ້ພະນັກງານ ມີຄຸນທາດການເມືອງໜັກແໜ້ນ, ມີ ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ-ຈັນຍາທຳ, ວຽກງານວິຊາສະເພາະ ໃຫ້ເຂັ້ມງວດປະຕິບັດ ຕາມກົດໝາຍຫຼາຍຂຶ້ນກວ່າເກົ່າ, ຕິດຕາມກວດກາ, ຊຸກຍູ້ ແລະ ສ້າງເງື່ອນໄຂໃຫ້ອົງການໄອຍະ ການປະຊາຊົນ ສາມາດຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມລັດຖະທຳມະນູນ ແລະ ກົດໝາຍກຳນົດໄວ້ ຢ່າງເຂັ້ມງວດ;

3) ເອົາໃຈໃສ່ຕິດຕາມກວດກາ ແລະ ປະເມີນຜົນຕໍ່ພະນັກງານ ຂອງອົງການໄອຍະການປະຊາຊົນ ແຂວງ ແລະ ເຂດ ໃນການຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ ຕາມຄຳຂວັນຮັກຊາດ ແລະ ພັດທະ ນາ ດ້ວຍເນື້ອໃນ 3 ມີ 4 ຮັບປະກັນ ຂອງອົງການໄອຍະການປະຊາຊົນ ເລືອກໃຫ້ໄດ້ຜູ້ທີ່ດີເດັ່ນ ແລະ ມີມາດຕະການເຂັ້ມງວດຕໍ່ຜູ້ທີ່ລະເມີດກົດໝາຍ;

4) ສືບຕໍ່ເອົາໃຈໃສ່ປະສານສົມທົບ ປຶກສາຫາລື ແລະ ຂໍທິດຊີ້ນຳ ກັບຄະນະພັກ, ອຳນາດການ ປົກຄອງທ້ອງຖິ່ນ, ສະພາປະຊາຊົນແຂວງ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1) ມອບໃຫ້ ອົງການໄອຍະການປະຊາຊົນແຂວງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2) ມອບໃຫ້ ອົງການປົກຄອງແຂວງ ຊີ້ນໍາອົງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
3) ມອບໃຫ້ ຄະນະປະຈໍາສະພາປະຊາຊົນແຂວງ, ຄະນະກໍາມະການຍຸຕິທໍາ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງບໍລັນ ຄໍາພັນເພັງ